# ຂ່າວປະຊາສຳພັນ

ສະຖານະການປັດຈຸບັນຂອງການແຜ່ລະບາດໃນທົ່ວໂລກຂອງພະຍາດໂຄວິດ-19ໄດ້ສົ່ງຜົນກະທົບ ບັນດາຫຼາຍໆກິດຈະກຳພາຍໃນໂຄງການ FORHEAL, ເຊິ່ງກຳລັງດຳເນີນການຢູ່ໃນ 03 ມະຫາວິທະຍາໄລເອີລົບ ແລະ ປະເທດລາວໃນສາຂາວິຊາປ່າໄມ້. ມາດຕະການທີ່ປ້ອງກັນການລະບາດຂອງພະຍາດໄວຣັດ SARS-COV-2 ມີຜົນກະທົບໃນທາງລົບ ໂດຍສະເພາະແມ່ນການແລກປ່ຽນນັກສຶກສາ ຫຼື ການປະຊຸມສາກົນຂອງອົງການ ເຊິ່ງນອນຢູ່ໃນຮູບແບບພາກສ່ວນທີ່ສຳຄັນຂອງໂຄງການ FORHEAL.

ຈຸດປະສົງລວມຂອງໂຄງການ ERASMUS+ ແມ່ນເພື່ອສ້າງຄວາມເຂັ້ມແຂງໃນລະບົບການສຶກສາຊັ້ນສູງໃນລາວທີ່ກ່ຽວຂ້ອງກັບປ່າໄມ້, ເພື່ອປັບປຸງຄວາມອາດສາມາດພາຍໃນປະເທດໃນການບໍລິຫານປ່າໄມ້ແບບຍືນຍົງເພື່ອຜົນປະໂຫຍດຂອງປະຊາຊົນ ແລະ ສິ່ງແວດລ້ອມ, ໃນຂະນະດຽວ ການໃຫ້ສິດປະເທດລາວເພື່ອຕອບສະໜອງຢ່າງມີປະສິດທິພາບກັບຄວາມຕ້ອງການ ແລະ ໂອກາດຂອງຂະບວນການສາກົນຕ່າງໆເຊັ່ນ: ເປົ້າໝາຍການພັດທະນາແບບຍືນຍົງ 2030 ແລະ ສັນຍາ ປາຣີ ດ້ານການປ່ຽນແປງດິນຟ້າອາກາດ. ໃນໂຄງການ ມະຫາວິທະຍາໄລເຮຊິນກິ, ແລະ ສອງມະຫາວິທະຍາໄລເອີລົບ (ມະຫາວິທະຍາໄລໄຟເບີກ ແລະ ມະຫາວິທະຍາໄລເຊັກວິທະຍາສາດຊີວິດ ປຣາກ) ແມ່ນຝ່າຍການປະສານງານ ແລະ 3 ມະຫາວິທະຍາໄລໃນປະເທດລາວ (ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສະຫວັນນະເຂດ, ມະຫາວິທະຍາສຸພານຸວົງ)ແມ່ນຝ່າຍຮ່ວມມືໃນໂຄງການ.

ຜົນກະທົບຂອງການແຜ່ລະບາດພະຍາດໂຄໂລນ້າຕໍ່ກັບໂຄງການແມ່ນມີຄວາມສຳຄັນຫຼາຍ ເພາະວ່າ ປີ 2020 ແມ່ນເປັນປີສຸດທ້າຍຂອງການດຳເນີນການ ແລະ ເປົ້າໝາຍໂຄງການທັງໝົດແມ່ນຕ້ອງໄດ້ປະຊຸມກັນໃນທ້າຍເດືອນຕຸລາ.

ແຕ່ເນື່ອງຈາກກະແຜ່ລະບາດທົ່ວໂລກຂອງໄວຣັດ ຊີວິດການເຮັດວຽກໄດ້ປ່ຽນແປງໄປຫຼາຍຕໍ່ຜູ້ປະສານງານໂຄງການ, ມະຫາວິທະຍາໄລເຮວຊິນກິ ສະຖານະການສະເພາະກິດໄດ້ຖືກປະກາດໂດຍທີມບໍລິຫານຈັດການພະຍາດໄວຣັດໂຄໂລນ້າຂອງມະຫາວິທະຍາໄລໃນວັນທີ 12 ມີນາ 2020. ມະຫາວິທະຍາໄລເຮວຊິນກິໄດ້ວາງແຜນໃນການເປັນເຈົ້າພາບຮັບພະນັກງານ-ຄູອາຈານຈາກມະຫາວິທະຍາໄລແຫ່ງຊາດລະຫວ່າງເດືອນເມສາ ຫາ ເດືອນພຶດສະພາ ເຊິ່ງເປັນພາກສ່ວນໜຶ່ງຂອງໂຄງການ FORHEAL. ແຕ່ຢ່າງໃດກໍ່ຕາມ ມະຫາວິທະຍາໄລເຮວຊິນກິກໍ່ໄດ້ຍົກເລີກການແລກປ່ຽນນັກສຶກສາ ແລະ ພະນັກງານທັງໝົດ ໃນວັນທີ 16 ມີນາ ຫາ 31 ພຶດສະພາ 2020. ໂຄງການຈະກຳນົດວັນ ແລະ ເວລາສຳຫຼັບການແລກປ່ຽນອີກຄັ້ງພາຍຫຼັງທີ່ສະຖານະການສະເພາະກິດຈົບລົງ.

ມະຫາວິທະຍາໄລເຊັກວິທະຍາສາດຊີວິດ ປຣາກ (CZU) ແມ່ນອົງການທຳອິດໃນສາທາລະນະລັດເຊັກທີ່ມີຜູ້ທີ່ພະນັກງານຕິດເຊື້ອພະຍາດໄວຣັດສາຍພັນໃໝ່ SAR-CoV-2 ເຊິ່ງມັນເກີດຂຶ້ນໃນວັນທີ 01 ມີນາ 2020. ທຸກມາດມາດຕະການທີ່ນຳມາໃຊ້ໄດ້ມີຜົນກະທົບຕໍ່ການຮ່ວມມືກັບຕ່າງປະເທດຫຼາຍທີ່ສຸດ ລວມທັງການແລກປ່ຽນຕ່າງໜ້າຈາກມະຫາວິທະຍາໄລສະຫວັນນະເຂດ ປະເທດລາວທີ່ຈະເດີນທາງໄປມະຫາວິທະຍາໄລ CZU ພາຍໃຕ້ໂຄງການ FORHEAL. ມະຫາວິທະຍາໄລ CZU ໄດ້ວາງແຜນເປັນເຈົ້າພາບໃນການຕ້ອນຮັບຜູ້ຕ່າງໜ້າຈາກມະຫາວິທະຍາໄລສະຫວັນນະເຂດ (ມຂ) 03 ທ່ານເປັນເວລາຫຼາຍອາທິດ ເພື່ອປັບປຸງທັກສະຂອງພວກເຂົາໃນການວາງແຜນຊັບພະຍາກອນປ່າໄມ້, ການຂຸດຄົ້ນປ່າໄມ້, ວັນນະວັດ, ແລະ ເສດຖະສາດປ່າໄມ້. ບັນດາຜູ້ຕ່າງໜ້າຈາກ ມຂ ຖືກຄັດເລືອກໃຫ້ເຮັດວຽກຮ່ວມກັບຜູ້ຊ່ຽວຊານເຊັກໃນການປັບປຸງຄຸນນະພາບການສຶກສາຊັ້ນສູງທີ່ມີໃນມະຫາວິທະຍາໄລສະຫວັນນະເຂດສຳຫຼັບນັກສຶກສາໃນການສຶກສາໂຄງການທີ່ສຸມໃສ່ດ້ານປ່າໄມ້ ແລະ ເສດຖະ

Co-funded by the Erasmus+ Programme of the European Union

ກິດຊີວະພາບຈາກປ່າໄມ້. ເຖິງຢ່າງໃດກໍ່ຕາມ CUZ ຫວັງວ່າຈະຕ້ອນຮັບຄືນລາວທີ່ເດີນທາງເຂົ້າມານະຄອນຫຼວງປຣາກ ຖ້າຫາກວ່າສະຖານະການຖືກອະນຸຍາດ ແລະ ດຳເນີນການທຸກໆແຜນກິດຈະກຳສຳຫຼັບການແລກປ່ຽນໄດ້.

ການປິດປະເທດເຢຍລະມັນໄດ້ກະທົບໃສ່ແຜນການຢ້ຽມຢາມຂອງຄະນະຜູ້ແທນຈາກມະຫາວິທະຍາໄລສຸພານຸວົງທີ່ຈະເດີນທາງໄປມະຫາວິທະຍາໄລດເຟບຣິກທີ່ຖືກຈັດຕາຕະລາງໄວ້ໃນຊ່ວງເດືອນພຶດສະພາ. ບັນດາຜູ້ຕ່າງໜ້າຂອງມະຫາວິທະຍາໄລເຟເບຣິກຫວັງຢ່າງຍິ່ງວ່າຮັບຮູ້ເຖິງການຢ້ຽມຢາມໃນຄັ້ງນີ້ໄວເທົ່າທີ່ຈະເປັນໄປໄດ້ ເພື່ອປຶກສາຫາລື ແລະ ລິເລີ່ມການຮ່ວມມືຢ່າງມີປະສິດທິພາບຂອງເນື້ອໃນຫຼັກສູດທີ່ຈັດໃຫ້ໂດຍມະຫາວິທະຍາໄລເຟເບຣິກເຂົ້າໃນຫຼັກສູດການຮຽນ-ການສອນຂອງມະຫາວິທະຍາໄລສຸພານຸວົງ.

ໃນໄລຍະສະຖານະການທີ່ບໍ່ຄາດຄິດນີ້, ຄູ່ຮ່ວມໂຄງການເອີລິບໄດ້ຈັດກອງປະຊຸມສຳຄັນກັບຄູ່ຮ່ວມຝ່າຍລາວໂດຍການນຳໃຊ້ເຄື່ອງມືອີເລັກໂຕນິກ ຖ້າຫາກວ່າມີຄວາມຈຳເປັນ.

*ການສະໜັບສະໜູນຄະນະກຳມະການຢູໂລບສຳລັບຜະລິດຕະພັນຂອງສື່ສິ່ງພິມນີ້ບໍ່ໄດ້ປະກອບເຂົ້າໃນການຮັບຮອງຂອງເນື້ອໃນ ເຊິ່ງສະທ້ອນມຸມມອງພຽງຢ່າງດຽວຂອງບັນດານັກຂຽນ, ແລະ ຄະນະກຳມະການບໍ່ສາມາດຈັດຄວາມຮັບຜິດຊອບໃນການນຳໃຊ້ໃດໆ ຈາກຂໍ້ມູນໃນນີ້.*

# Press release

**Current situation of Covid-19 pandemic significantly affects the activities within FORHEAL project, which is being implemented by three major forestry European universities and three universities from Laos. The measures taken to prevent the spread of the SARS-COV-2 virus have a negative impact, in particular on the international mobility of students or the organization of international meetings, which also form a substantial part of the FORHEAL project.**

The overall aim of this ERASMUS+ project is to strengthen the forest-related higher education system in Laos, to improve domestic capacity to sustainably manage forests for the benefit of the people and the environment, while at the same time enabling Laos to effectively respond to the demands and opportunities of international processes such as the Agenda 2030 (SDGs) and the Paris Agreement on Climate Change. Project is coordinated by University of Helsinki, two other European universities (University of Freiburg and Czech University of Life Sciences Prague) and three Laotian universities (National University of Laos, Savannakhet university and Souphanouvong University) are also collaborating on the project.

The impacts of coronavirus outbreak on the project are especially very significant, because 2020 is the last year of the implementation and all project goals are to be met by the end of October.

Due to virus pandemic working life has changed a lot at project coordinator, the University of Helsinki. An exceptional situation was declared by the coronavirus management team of the University on 12 March. As part of the FORHEAL project, University of Helsinki had a plan to host two incoming staff from National University of Laos in between April to May. However, the University of Helsinki has cancelled all student and staff exchanges of which beginning date is between March 16 and May 31, 2020. The project will set new dates for staff exchange once the exceptional period over.

Czech University of Life Sciences Prague was the first organization in the Czech Republic whose employee was positively tested for the new type of coronavirus SARS-CoV-2. It occurred on March 01, 2020. All adopted measures have had the greatest impact on foreign cooperation, including mobilities of representatives of the Savannakhet University in Laos to CZU Prague through the FORHEAL project. The Czech University of Life Sciences Prague planned to host three representatives from Laos for several weeks, to improve their skills in forest resource planning, forest harvesting, silviculture, and forestry economics. The Lao representatives were supposed to work in tandem with Czech experts on improving the quality of higher education provided at the Savannakhet University for students majoring in study programs focused on forestry and forest-based bioeconomy. Nevertheless, CZU hopes to welcome the Lao in Prague, if the situation permits, and carry out all the activities planned for the mobilities.

The lockdown in Germany has so far affected the planned visit of a delegation from Souphanouvong University to ALU-Freiburg that was scheduled for May. The representatives of ALU-Freiburg sincerely hope to realize this visit as soon as possible, to discuss and initiate the effective incorporation of the contents of the courses provided by ALU-Freiburg into the curricula of Souphanouvong University.

During this unexpected circumstance, European project partners have organized virtual meetings with their Laos partner by using electronic tools if necessary.

*The European Commission support for the production of this publication does not constitute an endorsement of the contents which reflects the views only of the authors, and the Commission cannot be held responsible for any use which may be made of the information contained therein.*

Co-funded by the Erasmus+ Programme of the European Union